ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..........................................................

ແຂວງຫຼວງນ້ຳທາ

ເຈົ້າແຂວງ

ເລກທີ 02........./ຈຂ

ຫລວງນ້ຳທາ, ວັນທີ 20/ມ.ສ./2014

# ຄຳສັ່ງ

ວ່າດ້ວຍການເພີ້ມທະວີເອົາໃຈໃສ່ການຕິດຕາມເຝົ້າລະວັງ ແລະ ສະກັດກັ້ນການລະບາດຂອງພະຍາດໄຂ້ຫວັດສັດປີກ ສາຍພັນໃໝ່ H5N1,H7N9 ແລະ ພະຍາດສັດຕາມລະດູການ.

- ອີງຕາມ: ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 03/ສພຊ ວັນທີ 25 ກໍລະກົດ 2008
- ອີງຕາມ: ຄຳສັ່ງຂອງ ທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 18/ນຍ ລົງວັນທີ 3/4/2014 ວ່າດ້ວຍການປ້ອງກັນການລະບາດຂອງພະຍາດໄຂ້ຫວັດສັດປີກ $H_5N_1$ , $H_7N_9$ ໄຂ້ຍຸງລາຍ,ໄຂ້ຫວັດລະດູການ ແລະ ພະຍາດຖອກທ້ອງກະທັນຫັນ
- ອີງຕາມ: ແຈ້ງການຂອງຫົວໜ້າກົມລ້ຽງສັດ ແລະ ການປະມົງ ເລກທີ 0161/ກລປ ລົງວັນທີ 4 ກຸມພາ 2014 ກ່ຽວກັບການເພີ້ມທະວີຄວາມເອົາໃຈໃສ່ ຕິດຕາມ ດູແລຮັກສາສຸຂະພາບສັດ ເພື່ອເປັນການເຝົ້າລະວັງ ແລະ ສະກັດກັ້ນບໍ່ໃຫ້ມີການລະບາດຂອງພະຍາດສັດ.

## ເຈົ້າແຂວງຫລວງນ້ຳທາອອກຄຳສັ່ງ

1. ໃຫ້ເຈົ້າເມືອງ ທັງ 5 ເມືອງ ແລະ ຄະນະກຳມະການຕ້ານ ແລະ ຄວບຄຸ້ມພະຍາດຕິດຕໍ່ ຂັ້ນແຂວງ, ຂັ້ນເມືອງ, ສອງກອງບັນຊາການ ປກຊ, ປກສ ຫົວໜ້າພະແນກ, ອົງການຈັດຕັ້ງທົ່ວພັກລັດ ແລະ ເອກະຊົນເອົາໃຈໃສ່ຊີ້ນຳ - ນຳພາ ຢູ່ກົມກອງຂອງຕົນ ກໍ່ຄືອົງການປົກຄອງບ້ານ ທຸກໆບ້ານ ປຸກລະດົມປະຊາຊົນຊັ້ນຄົນຕ່າງໆ ໃນທົ່ວສັງຄົມເຂົ້າຮ່ວມໃນການຕ້ານ ແລະ ສະກັດກັ້ນ ການລະບາດຂອງພະຍາດຕິດຕໍ່ຈາກສັດສູ່ສັດ ແລະ ພະຍາດຕິດຕໍ່ຈາກສັດສູ່ຄົນ ເຊັ່ນ : *ພະຍາດໄຂ້ຫວັດສັດປີກ, ພະຍາດໄຂ້ເລືອດດຳ, ພະຍາດວໍ້, ພະຍາດລໍຊໍ, ພະຍາດຢ່ຽວໝູ ແລະ ພະຍາດໃບໄມ້ໃນຕັບ;*
2. ປຸກລະດົມຊຸກຍູ້ ປະຊາຊົນ ຊາວກະສິກອນຜູ້ລ້ຽງສັດ, ຜູ້ປະກອບການ ເກັບຊື້-ຂາຍສັດ,ຈຳໜ່າຍຂາຍຊີ້ນ, ບັນດາບໍລິສັດ, ຮ້ານຮ້ານທີ່ຈຳໜ່າຍອາຫານສັດ, ຢາສຳລັບສັດ, ບັນດາເຈົ້າຂອງຟາມລ້ຽງສັດທຸກຊະນິດ ໃຫ້ເອົາໃຈໃສ່ຕິດຕາມເບິ່ງແຍງສຸຂະພາບສັດ, ອາການສະແດງ ຂອງສັດ ເປັນປະຈຳ ຕິດຕາມແຫຼ່ງທີ່

ມາຂອງແນວພັນສັດ, ຜະລິດຕະພັນສັດ, ທີ່ມີການ ຊື້ - ຂາຍ ເຂົ້າອອກຢູ່ໃນບ້ານ ແລະ ຂອບເຂດການລ້ຽງສັດຂອງຕົນ;

3. ໃນກໍລະນີທີ່ພົບເຫັນສັດປີກ ເຈັບ ຫຼື ຕາຍ ໂດຍບໍ່ຮູ້ສາຍເຫດ, ຕາຍເປັນຈຳນວນຫລາຍໃນເວລາໄລ່ເລັ່ຍກັນນັ້ນ ເຈົ້າຂອງສັດຕ້ອງຮີບຮ້ອນລາຍງານ ໃຫ້ສັດຕະວະແພດບ້ານ ຫຼື 'ນາຍບ້ານ ເພື່ອລາຍງານຕໍ່ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍດ່ວນ ເພື່ອລົງຕິດຕາມກວດກາ ຂອບເຂດການລະບາດຂອງພະຍາດຕົວຈິງ, ພ້ອມດຽວກັນນັ້ນກໍ່ ຫ້າມນຳເອົາສັດທີ່ຕາຍ ຫຼື ເຫງົາ ໄປບໍລິໂພກ ແລະ ຈຳໜ່າຍ ຫຼື ເຄື່ອນຍ້າຍ ຊື້ - ຂາຍ ຢ່າງເດັດຂາດ, ຫ້າມບໍ່ໃຫ້ຖິ້ມລົງຫ້ວຍ, ຮອງ, ຄອງບຶງ, ແມ່ນ້ຳຕ່າງໆ ໃຫ້ຮີບຮ້ອນນຳໄປຝັງ ຫຼື ເຜົາຊາກສັດທີ່ຕາຍນັ້ນໂດຍໄວ;

4. ສຳລັບເມືອງທີ່ມີຊາຍແດນຕິດຈອດກັບ ຕ່າງປະເທດ ໃຫ້ປະສານກັບພາກສ່ວນກ່ຽວຂ້ອງ ກວດກາ ຢ່າງເຄັ່ງຄັດ, ເກືອດຫ້າມ ການນຳເຂົ້າ ແລະ ສົ່ງອອກ ສັດປີກ, ຜະລິດຕະພັນສັດປີກ ທຸກຊະນິດຕາມດ່ານຕ່າງໆ ຫລື ຕາມຊາຍແດນ ໂດຍສະເພາະແມ່ນການກວດ ຫາເອກະສານ ອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ຢ່າງເປັນທາງການ ຕ້ອງມີການຢັ້ງຢືນການປອດເຊື້ອພະຍາດ ແລະ ແຫຼ່ງທີ່ມາຂອງສັດປີກໂດຍອົງການລັດທີ່ກ່ຽວຂ້ອງຂອງປະເທດຕົ້ນທາງ ແລະ ຂອງລາວ ຖ້າບໍ່ມີການຢັ້ງຢືນດັ່ງກ່າວ ຫ້າມນຳເຂົ້າຢ່າງເດັດຂາດ ເພື່ອຄວາມໝັ້ນໃຈວ່າ ສັດປີກ ແລະ ຜະລິດຕະພັນສັດປີກ ມາຈາກແຫຼ່ງ ທີ່ບໍ່ມີການລະບາດຂອງປະເທດໃກ້ຄຽງ ຖ້າຫາກພົບເຫັນການລັກລອບ ນຳເຂົ້າ ໃຫ້ ກວດຍຶດ ແລະ ນຳໄປທຳລາຍຖິ້ມດ້ວຍການເຜົາ ຫຼື ຝັງ ສ່ວນຜູ້ລະເມີດ ໃຫ້ກ່າວເຕືອນ, ປັບໃໝ ຕາມລະບຽບກົດໝາຍ.

5. ເພື່ອຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດວຽກງານເຝົ້າລະວັງຕ້ານ ແລະ ສະກັດກັ້ນພະຍາດ ໄຂ້ຫວັດສັດປີກ ສາຍພັນ H5 N1 ແລະ H7 N9 ໄດ້ຮັບຜົນດີ ນັ້ນ ພວກເຮົາທຸກຄົນຕ້ອງມີສ່ວນຮ່ວມ ແລະ ເປັນເຈົ້າການ ເອົາໃຈໃສ່ຕິດຕາມກວດກາ ເຝົ້າລະວັງຢ່າງເຄັ່ງຄັດ ທັງນີ້ກໍ່ເພື່ອຄວາມປອດໄພຈາກພະຍາດອັນຕະລາຍຮ້າຍແຮງນີ້ ທີ່ເຄີຍເກີດມີການລະບາດຢູ່ແຂວງຫຼວງນ້ຳທາ ຂອງພວກເຮົາມາແລ້ວໃນປີ 2008

6. ໃຫ້ອົງການປົກຄອງບ້ານ,ນາຍບ້ານ ແລະ ອົງຈັດຕັ້ງທຸກພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຕິດຕາມ ກວດກາການເຄື່ອນຍ້າຍສັດຈາກ ບ້ານໜຶ່ງໄປຫາບ້ານໜຶ່ງ, ຈາກເມືອງໜຶ່ງໄປຫາເມືອງອື່ນ, ຈາກແຂວງໜຶ່ງໄປຫາອີກແຂວງອື່ນໆ ຜູ້ປະກອບການຊື້ - ຂາຍສັດ ແລະ ບຸກຄົນໃດໜຶ່ງ, ອົງການຈັດຕັ້ງໃດໜຶ່ງ ມີຈຸດປະສົງເຄື່ອນຍ້າຍສັດ, ຜະລິດຕະພັນສັດ, ສິນຄ້າກ່ຽວກັບສັດ ທຸກໆຄັ້ງ ຕ້ອງປະກອບເອກະສານດັ່ງນີ້:

- ໃບຢັ້ງຢືນ ຊື້ - ຂາຍສັດ ຈາກນາຍບ້ານ
- ໃບຢັ້ງຢືນການສັກຢາປ້ອງກັນພະຍາດສັດ ຈາກສັດຕະວະແພດບ້ານ ຫຼື ເມືອງ
- ໃບທະບຽນພິມສັດ ຈາກສັດຕະວະແພດບ້ານ
- ໃບຢັ້ງຢືນສຸຂະພາບສັດ ຈາກສັດຕະວະແພດເມືອງ
- ໃບຢັ້ງຢືນສຸຂານາໄມຜະລິດຕະພັນ ຈາກຂະແໜງລ້ຽງສັດ ແລະ ການປະມົງ ( ຖ້າເປັນຜະລິດຕະພັນ )

ໃບອະນຸຍາດການເຄື່ອນຍ້າຍສັດພາຍໃນ ຈາກຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ຖ້າມີຈຸດປະສົງມີການເຄື່ອນຍ້າຍສັດໄປຍັງຕ່າງແຂວງ ໃຫ້ມີ *ໃບອະນຸຍາດການເຄື່ອນຍ້າຍສັດ* ອອກໃຫ້ ໂດຍພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ;

7. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ຕິດຕາມ,ກວດກາ ແລະ ເຂັ້ມງວດ ຕໍ່ການການເຄື່ອນຍ້າຍຂອງສັດທີ່ມາຈາກຕ່າງປະເທດ, ການຂົນສົ່ງສັດຜ່ານ ແລະ ການເຄື່ອນຍ້າຍສັດຢູ່ພາຍໃນ ໂດຍສະເພາະແມ່ນຂະບວນການລັກຊື້ - ຂາຍສັດ ອອກນອກປະເທດ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ໂດຍໃຫ້ມີການສ້າງຕັ້ງຈຸດເຝົ້າລະວັງທີ່ເຫັນວ່າມີຄວາມສ່ຽງ ຕາມເສັ້ນທາງທີ່ມີການລັກລອບ;
8. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ປະສານສົມທົບກັບ ພະແນກສາທາລະນະສຸກ ເພື່ອຕິດຕາມເຝົ້າລະວັງການລະບາດຂອງພະຍາດຕິດຕໍ່ ຈາກສັດ ສູ່ຄົນ ຢ່າງໃກ້ສິດ ແລະ ສືບປັບປຸງທີມງານຕອບໂຕ້ດ່ວນລະຫວ່າງຂະແໜງລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ກັບ ຂະແໜງລະບາດວິທະຍາ ພ້ອມທັງສ້າງແຜນການ ເພື່ອຈັດຕັ້ງປະຕິບັດວຽກງານຢ່າງທັນການ ໃນເວລາມີການລະບາດຂື້ນ
9. ໃຫ້ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສາຫະກຳ ແລະ ການຄ້າ ແລະ ພະແນກສາທາລະນະສຸກ ຈັດຕັ້ງການໂຄສະນາເຜີຍແຜ່ທາງວິທະຍຸ ໂທລະໂຄງ, ໂທລະພາບ,ໜັງສືພິມ ແລະ ອື່ນໆ ເພື່ອໃຫ້ຄວາມຮູ້ແກ່ປະຊາຊົນໃນປ້ອງກັນພະຍາດ;
10. ໃຫ້ບັນດາເຈົ້າເມືອງ, ຫົວໜ້າພະແນກການ, ນາຍບ້ານທຸກໆບ້ານ ແລະ ອົງການຈັດຕັ້ງທຸກພາກສ່ວນ ຈົ່ງພ້ອມກັນຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕົວຈິງຢ່າງເຂັ້ມງວດ ແລະ ທັນການ;
11. ຄຳສັ່ງສະບັບນີ້ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກ່າວຈະມີການປ່ຽນໃໝ່.

ເຈົ້າແຂວງຫຼວງນໍ້າທາ

ດຣ ພົມມະສອນ ເລືອງຄຳມາ